ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເລກທີ 10 /ຫກ
ນະຄອນຫຼວງວຽງຈັນ, ວັນທີ 15 ມັງກອນ 2026

# ແຈ້ງການ

**ເຖິງ: ພໍ່ແມ່ປະຊາຊົນ, ຊາວຄ້າຂາຍ, ພະນັກງານ, ທະຫານ ແລະ ຕໍາຫຼວດ ໃນຂອບເຂດທົ່ວປະເທດ.**
**ເລື່ອງ: ເພີ່ມທະວີການມີສະຕິລະວັງຕົວໃນການຊໍາລະ ແລະ ຮັບຊໍາລະ ຜ່ານ Alipay, Alipay Plus ແລະ WeChat Pay ຢູ່ ສປປ ລາວ.**

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການ ສະບັບເລກທີ 444/ທຫລ, ລົງວັນທີ 14 ມິຖຸນາ 2022;
- ອີງຕາມ ຂໍ້ຕົກລົງວ່າດ້ວຍລະບົບການໃຫ້ບໍລິການຊໍາລະເງິນ ສະບັບເລກທີ 511/ທຫລ, ລົງວັນທີ 19 ມິຖຸນາ 2025;
- ອີງຕາມ ແຈ້ງການ ລາຍຊື່ຜູ້ຄວບຄຸມລະບົບການຊໍາລະທຸລະກໍາຍ່ອຍ, ຜູ້ໃຫ້ບໍລິການຊໍາລະ ທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ສະບັບເລກທີ 461/ຄລຊ, ລົງວັນທີ 17 ມີນາ 2021.

ຫ້ອງການ ທະນາຄານແຫ່ງ ສປປ ລາວ (ທຫລ) ຂໍຖືເປັນກຽດແຈ້ງມາຍັງ ພໍ່ແມ່ປະຊາຊົນ, ຊາວຄ້າຂາຍ, ພະນັກງານ, ທະຫານ ແລະ ຕໍາຫຼວດ ໃນຂອບເຂດທົ່ວປະເທດ ຊາບວ່າ: ປັດຈຸບັນ ທຫລ ໄດ້ອະນຸຍາດໃຫ້ຜູ້ໃຫ້ບໍລິການຊໍາລະເງິນ ຜ່ານ Alipay, Alipay Plus ຫຼື WeChat Pay ຈໍານວນ 08 ແຫ່ງ ເພື່ອອໍານວຍຄວາມສະດວກໃຫ້ຜູ້ຮັບຊໍາລະ (ຮ້ານຄ້າ, ຮ້ານອາຫານ, ໂຮງແຮມ, ສະຖານທີ່ທ່ອງທ່ຽວ ແລະ ອື່ນໆ) ທີ່ຢູ່ ສປປ ລາວ ໃນການຮັບຊໍາລະຈາກຜູ້ໃຊ້ບໍລິການ (ສໍາລັບຕາຕະລາງລາຍລະອຽດການໃຫ້ບໍລິການຮັບເງິນເອເລັກໂຕຣນິກຂອງຕ່າງປະເທດ (Electronic Money Acquiring) ເອກະສານຄັດຕິດ 01).

ຜ່ານການຕິດຕາມກວດກາການໃຫ້ບໍລິການຮັບຊໍາລະເງິນດັ່ງກ່າວ ເຫັນວ່າ: ປັດຈຸບັນ ມີບຸກຄົນ, ນິຕິບຸກຄົນ ຫຼື ອົງກອນ ຈໍານວນໜຶ່ງ ໄດ້ສວຍໃຊ້ຊ່ອງທາງການຮັບຊໍາລະ ຜ່ານ Alipay, Alipay Plus ຫຼື WeChat Pay ເພື່ອຮັບຊໍາລະຄ່າສິນຄ້າ ແລະ ບໍລິການ ລວມທັງການໃຫ້ບໍລິການໂອນເງິນ ໂດຍບໍ່ໄດ້ຮັບອະນຸຍາດຈາກ ທຫລ ຢ່າງແຜ່ຫຼາຍເຊັ່ນ: ການຕັ້ງປ້າຍ (QR Code) ຢູ່ຮ້ານຄ້າຂອງຕົນ, ການຮັບໂອນເງິນເຂົ້າກະເປົາ Alipay, Alipay Plus ຫຼື WeChat Pay ທີ່ຜູກກັບບັນຊີເງິນຝາກຂອງບຸກຄົນຢູ່ຕ່າງປະເທດ ຊຶ່ງການກະທໍາດັ່ງກ່າວ ແມ່ນຂັດກັບນະໂຍບາຍ ແລະ ລະບຽບກົດໝາຍຂອງ ສປປ ລາວ ແລະ ເປັນສາເຫດກໍ່ໃຫ້ເກີດມີການສໍ້ໂກງ ແລະ ສ້າງຄວາມເສຍຫາຍຈໍານວນຫຼາຍໃຫ້ຜູ້ໃຊ້ບໍລິການ.

ສະນັ້ນ, ຫ້ອງການ ທຫລ ຈຶ່ງຂໍແຈ້ງມາຍັງທ່ານ ດັ່ງນີ້:

1. ຜູ້ຮັບຊໍາລະ ເປັນຕົ້ນ ຮ້ານຄ້າ, ຮ້ານອາຫານ, ໂຮງແຮມ, ສະຖານທີ່ທ່ອງທ່ຽວ ທີ່ຕ້ອງການຮັບຊໍາລະຄ່າສິນຄ້າ ແລະ ບໍລິການຂອງຕົນ ຜ່ານ Alipay, Alipay Plus ຫຼື WeChat Pay ຕ້ອງໃຊ້ບໍລິການຈາກ ຜູ້ໃຫ້ບໍລິການຊໍາລະເງິນທີ່ໄດ້ຮັບອະນຸຍາດຈາກ ທຫລ ເທົ່ານັ້ນ. ລາຍຊື່ຜູ້ໃຫ້ບໍລິການຮັບຊໍາລະ



ທະນາຄານແຫ່ງ ສປປ ລາວ, ຖະໜົນ ຍອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 BNL.VTE.LS
ໂທລະສານ: (856)-21-213108 ໂທລະສັບ: 213109-213110 Email: BOL@bol.gov.la; www.bol.gov.la

Alipay, Alipay Plus ຫຼື WeChat Pay ທີ່ໄດ້ຮັບອະນຸຍາດຈາກ ທຫລ ໄດ້ຄັດຕິດມາພ້ອມນີ້. ນອກຈາກນີ້, ທ່ານສາມາດຕິດຕາມຂໍ້ມູນຜ່ານທາງເວັບໄຊຂອງ ທຫລ ຜ່ານ www.bol.gov.la ໂດຍເຂົ້າໄປທີ່ "ແຈ້ງການ" ຫຼື ສອບຖາມຂໍ້ມູນເພີ່ມຕື່ມໄດ້ທີ່ ກົມຄຸ້ມຄອງລະບົບການຊໍາລະ ຜ່ານເບີໂທລະສັບ 021 253596, 021 253595 ຫຼື ຜ່ານຊ່ອງທາງອີເມວ E-mail address: oversight.psd@gmail.com ຫຼື licensing.psd@gmail.com ໃນໂມງເວລາລັດຖະການ;

2. ຫຼີກລ້ຽງການຊໍາລະ ຫຼື ດໍາເນີນທຸລະກໍາ ຜ່ານ Alipay, Alipay Plus ຫຼື WeChat Pay ຂອງຜູ້ໃຫ້ບໍລິການຊໍາລະທີ່ບໍ່ໄດ້ຮັບອະນຸຍາດຈາກ ທຫລ ເນື່ອງຈາກການຊໍາລະດັ່ງກ່າວ ເປັນການຊໍາລະນອກລະບົບ ເຖິງວ່າການຊໍາລະຈະເກີດຂຶ້ນຢູ່ ສປປ ລາວ ກໍ່ຕາມ, ແຕ່ຂໍ້ມູນທຸລະກໍາການຊໍາລະຢູ່ນອກປະເທດ ເມື່ອເກີດມີການສໍ້ໂກງ ຫຼື ຂໍ້ຂັດແຍ່ງ ແມ່ນຈະບໍ່ສາມາດກວດສອບ ແລະ ແກ້ໄຂຢູ່ ສປປ ລາວ ໄດ້.

ນອກຈາກນີ້, ຫ້ອງການ ທຫລ ຂໍຄວາມຮ່ວມມືມາຍັງພໍ່ແມ່ປະຊາຊົນ, ຊາວຄ້າຂາຍ, ພະນັກງານ ແລະ ທະຫານຕໍາຫຼວດ ຕະຫຼອດຮອດຄົນຕ່າງປະເທດທີ່ອາໄສຢູ່ ສປປ ລາວ ໃຫ້ເພີ່ມຄວາມລະມັດລະວັງໃນການນໍາໃຊ້, ເມື່ອພົບເຫັນບຸກຄົນ, ນິຕິບຸກຄົນ, ຮ້ານຄ້າ, ຮ້ານອາຫານ, ຫ້າງຮ້ານ, ໂຮງແຮມ ຫຼື ພາກສ່ວນອື່ນໆ ມີການຮັບຊໍາລະຜ່ານ Alipay, Alipay Plus ຫຼື WeChat Pay ທີ່ສົງໄສວ່າບໍ່ໄດ້ຮັບອະນຸຍາດຈາກ ທຫລ ແມ່ນບໍ່ຄວນໃຊ້ບໍລິການດັ່ງກ່າວ ແລະ ໃຫ້ແຈ້ງມາຍັງກົມຄຸ້ມຄອງລະບົບການຊໍາລະ, ທຫລ ຜ່ານເບີໂທລະສັບ 021 253596, 021 253595 ໃນໂມງເວລາລັດຖະການ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງ ພໍ່ແມ່ປະຊາຊົນ, ຊາວຄ້າຂາຍ, ພະນັກງານ, ທະຫານ ແລະ ຕໍາຫຼວດ ຕະຫຼອດຮອດຄົນຕ່າງປະເທດ ໃນຂອບເຂດທົ່ວປະເທດ ເພື່ອຊາບ ແລະ ຈົ່ງມີສະຕິ, ລະມັດລະວັງໃນການນໍາໃຊ້ຊ່ອງທາງການຊໍາລະທີ່ບໍ່ຖືກຕ້ອງສອດຄ່ອງຕາມລະບຽບກົດໝາຍຂອງ ສປປ ລາວ ແລະ ບໍ່ໃຫ້ຫຼົງເຊື່ອຕໍ່ການໂຄສະນາຊວນເຊື່ອຕ່າງໆຂອງພາກສ່ວນອື່ນທີ່ບໍ່ໄດ້ຮັບອະນຸຍາດຈາກ ທຫລ.

ແຈ້ງການສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ແຈ້ງການສະບັບນີ້ ປ່ຽນແທນແຈ້ງການ ການເພີ່ມທະວີຄວາມມີສະຕິລະວັງຕົວໃນການຮັບຊໍາລະ ແລະ ຮັບຊໍາລະ ຜ່ານ AliPay ແລະ WeChat Pay ຢູ່ ສປປ ລາວ ສະບັບເລກທີ 199/ຫກ, ລົງວັນທີ 10 ມິຖຸນາ 2022.

ໃຊ້ແທນ ຫົວໜ້າຫ້ອງການ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເພັດສະໝອນ ແສງຈັນ

**ປະສານງານ:**

ພະແນກອອກອະນຸຍາດດໍາເນີນທຸລະກິດ, ກົມຄຸ້ມຄອງລະບົບການຊໍາລະ

ໂທ: 021-253595

**<u>ເອກະສານຄັດຕິດ 01:</u>**

**ຕາຕະລາງສັງລວມການໃຫ້ບໍລິການຮັບເງິນເອເລັກໂຕຣນິກຂອງຕ່າງປະເທດ (Electronic Money Acquiring) ຈຳນວນ 08 ແຫ່ງ**
**(ທະນາຄານ 05 ແຫ່ງ ແລະ ນິຕິບຸກຄົນ 03 ແຫ່ງ)**

| **ການໃຫ້ບໍລິການຮັບເງິນເອເລັກໂຕຣນິກຂອງຕ່າງປະເທດ (Electronic Money Acquiring)** | | | | |
|---|---|---|---|---|
| 1 | ທະນາຄານ ການຄ້າຕ່າງປະເທດລາວມະຫາຊົນ<br>BANQUE POUR LE COMMERCE EXTERIEUR LAO PUBLIC (BCEL) | 1. Alipay;<br>2. Wechat Pay. | ປ້າຍ QR ທີ່ມີສັນຍາລັກ Wechat Pay ແລະ Alipay ທີ່ທະນາຄານພິມອອກໃຫ້ຮ້ານຄ້າ | Alipay<br>微信支付 WeChat Pay |
| 2 | ທະນາຄານ ພັດທະນາລາວ<br>Lao Development Bank (LDB) | 1. Alipay;<br>2. AliVisa on Arrival;<br>3. Wechat Pay. | ປ້າຍ QR ທີ່ມີສັນຍາລັກ Alipay ທີ່ທະນາຄານພິມອອກໃຫ້ຮ້ານຄ້າ | Alipay+<br>Alipay<br>微信支付 WeChat Pay |
| 3 | ທະນາຄານ ຮ່ວມພັດທະນາ<br>JOINT DEVELOPMENT BANK (JDB) | 1. Alipay;<br>2. Wechat Pay. | ປ້າຍ QR ທີ່ມີສັນຍາລັກ Wechat Pay ແລະ Alipay ທີ່ທະນາຄານພິມອອກໃຫ້ຮ້ານຄ້າ. | Alipay<br>微信支付 WeChat Pay |
| 4 | ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ ສາຂານະຄອນຫຼວງ<br>Industrial and Commercial Bank Of China Limited Vientiane Branch (ICBC) | Wechat Pay | ປ້າຍ QR ທີ່ມີສັນຍາລັກ Wechat Pay ທີ່ທະນາຄານພິມອອກໃຫ້ຮ້ານຄ້າ | Alipay+<br>微信支付 WeChat Pay |

| | | | | |
|---|---|---|---|---|
| 5 | ທະນາຄານ ແຫ່ງ ປະເທດຈີນ ຈຳກັດ ສາຂາ ນະຄອນຫຼວງ<br>Bank of China Limited, Vientiane branch (BOC) | 1. Alipay;<br>2. Wechat Pay. | ປ້າຍ QR ທີ່ມີສັນຍາລັກ Wechat Pay ແລະ Alipay ທີ່ທະນາຄານພິມອອກໃຫ້ຮ້ານຄ້າ | Alipay 微信支付 WeChat Pay |
| 6 | ບໍລິສັດ ແອັມພີເອສ ຈຳກັດ<br>(MPS) | Alipay | ປ້າຍ QR ທີ່ມີສັນຍາລັກ Alipay ທີ່ທະນາຄານພິມອອກໃຫ້ຮ້ານຄ້າ | Alipay |
| 7 | ບໍລິສັດ ລາວນິວເພເທັກໂນໂລຢີ ຈອຍເວັນເຈີ ຈຳກັດ<br>(NEWPAY) | 1. Alipay;<br>2. Alipay Plus;<br>3. Wechat Pay. | ປ້າຍ QR ທີ່ມີສັນຍາລັກ Wechat Pay ແລະ Alipay ທີ່ທະນາຄານພິມອອກໃຫ້ຮ້ານຄ້າ | Alipay+ Alipay 微信支付 WeChat Pay |
| 8 | ບໍລິສັດ ຊິນຮົວ ອິນເຕີເນັດເຊີນນໍ ເພເມັ້ນ ເທັກໂນໂລຢີ ຈຳກັດ<br>(Xinhua International Payment Technology Co.ltd) | Wechat Pay | ປ້າຍ QR ທີ່ມີສັນຍາລັກ Wechat Pay ທີ່ບໍລິສັດພິມອອກໃຫ້ຮ້ານຄ້າ | 微信支付 WeChat Pay |